ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະຂົນສົ່ງ

**ໂຄງການພັດທະນາຄວາມຍືນຍົງຂອງລັດວິສາຫະກິດການບິນລາວ**

**(P181359)**

# ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP)

28 ພະຈິກ 2023

# ຄຳສັບຫຍໍ້

| | |
|---|---|
| ESCP | ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESHS | ສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ |
| ESF | ຂອບສິ່ງແວດລ້ອມ ແລະ ສັງຄົມ |
| ESS | ມາດຖານສິ່ງແວດລ້ອມ ແລະ ສັງຄົມ |
| E&S | ສິ່ງແວດລ້ອມ ແລະ ສັງຄົມ |
| FMUTF | ກອງທຶນຄຸ້ມຄອງການເງິນ |
| GRM | ກົນໄກການແກ້ໄຂຂໍ້ຂ້ອງໃຈ |
| LMP | ຂັ້ນຕອນການຄຸ້ມຄອງແຮງງານ |
| MPWT | ກະຊວງໂຍທາທິການ ແລະ ຂົນສົ່ງ |
| PMU | ໜ່ວຍງານຄຸ້ມຄອງໂຄງການ |
| PTI | ສະຖາບັນໂຍທາທິການ ແລະ ຂົນສົ່ງ |
| QV | ການບິນລາວ |
| SEA/SH | ການເອົາປຽບທາງເພດ/ການລ່ວງລະເມີດທາງເພດ |
| SEP | ແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ |
| TA | ຄວາມຊ່ວຍເຫຼືອດ້ານວິຊາການ |
| USAID | ອົງການເພື່ອການພັດທະນາລະຫວ່າງປະເທດຂອງອາເມລິກາ |
| WB | ທະນາຄານໂລກ |

## ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP)

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ຕໍ່ໄປນີ້ເອີ້ນວ່າ "ຜູ້ຮັບທຶນ") ຈະຈັດຕັ້ງປະຕິບັດໂຄງການພັດທະນາຄວາມຍືນຍົງຂອງລັດວິສາຫະກິດການບິນລາວ (**ໂຄງການ**) ໂດຍມີກະຊວງໂຍທາທິການ ແລະ ຂົນສົ່ງເປັນເຈົ້າຂອງໂຄງການ ແລະ ມີລັດວິສາຫະກິດການບິນລາວເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການ ດັ່ງທີ່ໄດ້ກຳໜົດໄວ້ໃນສັນຍາທຶນຊ່ວຍເຫຼືອລ້າ ແລະ ສັນຍາໂຄງການ. ສະມາຄົມການພັດທະນາສາກົນ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານໂລກ") ຈະເປັນຜູ້ບໍລິຫານທຶນຊ່ວຍເຫຼືອລ້າທີ່ສະໜອງໃຫ້ໂດຍ ອົງການເພື່ອການພັດທະນາລະຫວ່າງປະເທດຂອງອາເມລິກາ (USAID) ຜ່ານກອງທຶນຄຸ້ມຄອງການເງິນ(FMUTF) ທີ່ໄດ້ເຫັນດີສະໜອງງົບປະມານໃຫ້ໂຄງການ ຕາມທີ່ກຳໜົດໄວ້ໃນສັນຍາທີ່ກ່າວມານັ້ນ.

2. ຜູ້ຮັບທຶນ ຈະຕ້ອງຮັບປະກັນວ່າໂຄງການດັ່ງກ່າວຖືກຈັດຕັ້ງປະຕິບັດຕາມມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ, ທີ່ທະນາຄານໂລກຍອມຮັບ. ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ແມ່ນສ່ວນໜຶ່ງຂອງສັນຍາທຶນຊ່ວຍເຫຼືອລ້າ ແລະ ສັນຍາໂຄງການ. ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມນີ້, ຄຳທີ່ໃຊ້ເປັນຕົວພິມໃຫຍ່ ສຳລັບພາສາອັງກິດແມ່ນ "ESCP" ນີ້ມີຄວາມໝາຍອ້າງອີງ ທີ່ລະບຸໄວ້ໃນຂໍ້ຕົກລົງ.

3. ໂດຍບໍ່ຈຳກັດຕໍ່ສິ່ງທີ່ໄດ້ກ່າວມາກ່ອນໜ້ານີ້, ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມນີ້ ໄດ້ກຳນົດມາດຕະການ ແລະ ການປະຕິບັດງານທີ່ຜູ້ຮັບທຶນ ຈະຕ້ອງປະຕິບັດ ຫຼື ເຮັດໃຫ້ເກີດການດຳເນີນການຕາມຄວາມເໝາະສົມ, ໄລຍະເວລາຂອງການປະຕິບັດ ແລະ ມາດຕະການ, ສະຖາບັນ, ພະນັກງານ, ການຝຶກອົບຮົມ, ການຕິດຕາມ, ການກະກຽມການລາຍງານ ແລະ ການຄຸ້ມຄອງຂໍ້ຂ້ອງໃຈ. ແຜນພັນທະດ້ານສັງຄົມ ແລະ ສິ່ງແວດລ້ອມຍັງໄດ້ກຳນົດເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ຈະໄດ້ຮັບການຮັບຮອງ ແລະ ປະຕິບັດພາຍໃຕ້ໂຄງການ, ເຊິ່ງທັງໝົດນີ້ຈະຕ້ອງມີການປຶກສາຫາລື ແລະ ເປີດເຜີຍກ່ອນການເລີ່ມຕົ້ນໂຄງການ ເພື່ອໃຫ້ສອດຄ່ອງກັບມາດຖານສິ່ງແວດລ້ອມ ແລະ ສັງຄົມ ໃນຮູບແບບ ແລະ ເນື້ອໃນທີ່ເປັນ ທີ່ຍອມຮັບໄດ້ໂດຍທະນາຄານໂລກ, ເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມ ອາດຈະໄດ້ຮັບການປັບປຸງເປັນແຕ່ລະໄລຍະ ຕາມການຕົກລົງເຫັນດີເປັນລາຍລັກອັກສອນຈາກທະນາຄານໂລກເສຍກ່ອນ.

4. ຕາມການຕົກລົງເຫັນດີຂອງທະນາຄານໂລກ ແລະ ຜູ້ຮັບທຶນ, ຖ້າຈຳເປັນ ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມນີ້ຈະໄດ້ຮັບການປັບປຸງເປັນແຕ່ລະໄລຍະ ໃນລະຫວ່າງການປະຕິບັດໂຄງການ, ເພື່ອສະແດງໃຫ້ເຫັນເຖິງການຄຸ້ມຄອງແບບມີການປັບໂຕ ຕາມການປ່ຽນແປງຂອງໂຄງການ ແລະ ສະພາບການທີ່ບໍ່ສາມາດຄາດຄະເນໄວ້ໄດ້ ຫຼື ເພື່ອຕອບສະໜອງຕາມຜົນຂອງການຈັດຕັ້ງປະຕິບັດໂຄງການ. ໃນສະພາບການດັ່ງກ່າວ, ຜູ້ຮັບທຶນ ໂດຍຜ່ານກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ທະນາຄານໂລກຈະໄດ້ຕົກລົງທີ່ຈະປັບປຸງ ແຜນພັນທະສິ່ງແວດລ້ອມ ແລະ ສັງຄົມ ເພື່ອສະທ້ອນເຖິງການປ່ຽນແປງເຫຼົ່ານີ້ ໂດຍຜ່ານການແລກປ່ຽນເອກະສານທີ່ໄດ້ລົງນາມ ລະຫວ່າງທະນາຄານໂລກ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເຊິ່ງທາງຜູ້ຮັບທຶນ ຈະຕ້ອງໄດ້ມີການເຜີຍແຜ່ ESCP ທີ່ໄດ້ຮັບການປັບປຸງດັ່ງກ່າວໂດຍທັນທີ.

| | ມາດຕະການ ແລະ ການປະຕິບັດ | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| **ການຕິດຕາມ ແລະ ການລາຍງານ** | | | |
| ກ | **ການຕິດຕາມ**<br><br>ກະຊວງມປົດລາຍງານການຕິດຕາມດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພຂອງໂຄງການ ຍື່ນສະເໜີຕໍ່ທະນາຄານໂລກ, ລວມທັງ ບໍ່ຈຳກັດແຕ່ການຈັດຕັ້ງປະຕິບັດແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ, ສະພາບການກະກຽມ ແລະ ການປະຕິບັດເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ຈຳເປັນ ພາຍໃຕ້ການຈັດຕັ້ງປະຕິບັດແຜນພັນທະທາງສິ່ງແວດລ້ອມ ແລະ ສັງຄົມ, ກິດຈະກຳການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການປະຕິບັດກົນໄກການແກ້ໄຂຂໍ້ຂ້ອງໃຈ (GRM). | ສົ່ງບົດລາຍງານທຸກໆ ຫົກເດືອນໃຫ້ທະນາຄານໂລກຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ | ໜ່ວຍງານຄຸ້ມຄອງໂຄງການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງທີ່ຖືກສ້າງຂຶ້ນໃນການບິນລາວ (MPWT/PMU) |
| ຂ | **ເຫດການ ແລະ ອຸປະຕິເຫດ**<br><br>ແຈ້ງໃຫ້ທະນາຄານໂລກຮັບຮູ້ໂດຍທັນທີ ກ່ຽວກັບເຫດການ ຫຼື ອຸປະຕິເຫດທີ່ກ່ຽວຂ້ອງກັບໂຄງການ ຖ້າມີ ຫຼື ອາດຈະມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຊຸມຊົນ, ປະຊາຊົນ ຫຼື ຜູ້ອອກແຮງງານ ທີ່ໄດ້ຮັບກະທົບທີ່ຫຼວງຫຼາຍ, ລວມທັງທີ່ກ່ຽວຂ້ອງກັບ ກໍລະນີການເອົາປຽບທາງເພດ ແລະ ການລ່ວງລະເມີດທາງເພດ ແລະ ອຸປະຕິເຫດທີ່ເຮັດໃຫ້ເກີດການເສຍຊີວິດ, ການບາດເຈັບສາຫັດ ຕ້ອງໃຫ້ລາຍລະອຽດພຽງພໍກ່ຽວກັບຂອບເຂດ, ສາເຫດທີ່ເກີດຂຶ້ນ, ຄວາມຮຸນແຮງ ແລະ ສາຍເຫດທີ່ເປັນໄປໄດ້ຂອງເຫດການ ຫຼື ອຸປະຕິເຫດ,ແຈ້ງໃຫ້ຮູ້ ກ່ຽວກັບມາດຕະການຮີບດ່ວນ ຫຼື ການວາງແຜນທີ່ຈະດຳເນີນການແກ້ໄຂ ແລະຂໍ້ມູນຕ່າງໆທີ່ຜູ້ຮັບເໝົາ ຫຼື ບໍລິສັດຄວບຄຸມງານ ສະໜອງໃຫ້ຕາມຄວາມເໝາະສົມ.<br><br>ຕໍ່ຈາກນັ້ນ, ຕາມການຮຽກຮ້ອງຂອງທະນາຄານໂລກ, ໃຫ້ກະຊວງມປົດລາຍງານກ່ຽວກັບເຫດການ ຫຼື ອຸປະຕິເຫດ ແລະ ໃຫ້ສະເໜີບັນດາມາດຕະການແກ້ໄຂ ແລະ ສະກັດກັ້ນບໍ່ໃຫ້ເກີດຂຶ້ນອີກ. | ແຈ້ງທະນາຄານໂລກໃຫ້ຮັບຮູ້ ພາຍໃນ 48 ຊົ່ວໂມງຫຼັງຈາກຮູ້ເຫດການ ຫຼື ອຸບັດຕິເຫດ.<br><br>ສະໜອງບົດລາຍງານໃຫ້ທະນາຄານໂລກພາຍໃນໄລຍະເວລາທີ່ໄດ້ຕົກລົງກັນ | MPWT/PMU |
| | ບົດລາຍງານຂອງຜູ້ຮັບເໝົາ<br><br>ຖ້າມີການຈ້າງຜູ້ຮັບເໝົາ, ຄວນສົ່ງບົດລາຍງານການຕິດຕາມກວດກາເປັນປົກກະຕິ ໂດຍສັງລວມການຈັດຕັ້ງປະຕິບັດມາດຕະການສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຕາມເອກະສານປະມູນ ແລະ ສັນຍາຂອງຜູ້ຮັບເໝົາ ແລະສົ່ງບົດລາຍງານຕໍ່ທະນາຄານໂລກ. | ສົ່ງບົດລາຍງານທຸກໆ ຫົກເດືອນໃຫ້ທະນາຄານໂລກຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ | MPWT/PMU |

| ມາດຕະການ ແລະ ການປະຕິບັດ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | | | |
| **ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ 1 (ມສສ 1): ວຽກງານການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ: ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ, ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ** | | | |
| 1.1 | ໂຄງສ້າງດ້ານອົງການຈັດຕັ້ງ<br><br>ສ້າງຕັ້ງ ແລະ ຮັກສາຫ້ອງການຄຸ້ມຄອງໂຄງການໂດຍສະໜອງພະນັກງານທີ່ມີຄວາມສາມາດ ແລະ ຊັບພະຍາກອນໃຫ້ພຽງພໍຕໍ່ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບ ດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ. ນອກຈາກນີ້ ສະຖາບັນໂຍທາທິການ ແລະ ຂົນສົ່ງຈະແຕ່ງຕັ້ງຜູ້ປະສານງານດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອສະໜັບສະໜູນຫ້ອງການຄຸ້ມຄອງໂຄງການ ໃນການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນດ້ານສິ່ງແວດລ້ອມ ແລະ ສັງຄົມ. | ໜ່ວຍງານຄຸ້ມຄອງໂຄງການຕ້ອງປະກອບມີຜູ້ປະສານງານດ້ານສິ່ງແວດລ້ອມ ແລະ ສັງຄົມ ໜຶ່ງຄົນ ແລະ ແຕ່ງຕັ້ງພະນັກງານດັ່ງກ່າວ ພາຍໃນ 45 ມື້ ຫຼັງຈາກທີ່ສັນຍາທຶນຊ່ວຍເຫຼືອລ້າໄດ້ຮັບການຮັບຮອງ.<br><br>ໜ່ວຍງານຄຸ້ມຄອງໂຄງການ ແລະ ຜູ້ປະສານງານດັ່ງກ່າວຈະຕ້ອງໄດ້ຮັບການແຕ່ງ ແລະ ຮັກສາໄວ້ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU/ສະຖາບັນໂຍທາທິການ ແລະ ຂົນສົ່ງ (PTI) |
| 1.2 | ເຄື່ອງມືໃນການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ<br><br>ນຳໃຊ້ ແລະ ຈັດຕັ້ງປະຕິບັດເອກະສານສິ່ງແວດລ້ອມ ໃຫ້ໄດ້ຕາມມາດຕະຖານທີ່ທະນາຄານໂລກຍອມຮັບ ເອກະສານດັ່ງກ່າວລວມມີ: ຂັ້ນຕອນການຄຸ້ມຄອງແຮງງານ (LMP), ແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ລວມທັງການປະຕິບັດກົນໄກການແກ້ໄຂຂໍ້ຂ້ອງໃຈ (GRM). | ນຳໃຊ້ LMP and SEP ກ່ອນທີ່ທາງທະນາຄານໂລກຈະອະນຸມັດໂຄງການ ແລະ ຈັດຕັ້ງປະຕິບັດຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU/PTI |

| | ມາດຕະການ ແລະ ການປະຕິບັດ | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| 1.3 | ການຄຸ້ມຄອງເຄື່ອງມືດ້ານສິ່ງແວດລ້ອມ<br><br>ກອບໜ້າວຽກຂອງທີ່ປຶກສາທີ່ຈະຊ່ວຍວຽກດ້ານວິຊາການ (ບົດສຶກສາ, ການສ້າງຄວາມເຂັ້ມແຂງຂອງສະຖາບັນ ແລະ ການປັບປຸງກອບກົດໝາຍ) ຈະຕ້ອງໄດ້ຮັບການທົບທວນ ແລະ ອະນຸມັດ ໂດຍທະນາຄານໂລກ ກ່ອນທີ່ການຈັດຊື້ຈະເລີ່ມຂຶ້ນ ເພື່ອຮັບປະກັນວ່າມາດຕະການທີ່ກໍານົດໄວ້ໃນກອບສິ່ງແວດລ້ອມ ແລະ ສັງຄົມຈະໄດ້ຮັບການພິຈະລະນາ. ຄວາມສ່ຽງ ແລະ ຜົນກະທົບໄລຍະຍາວທີ່ອາດຈະເກີດຂຶ້ນຈາກໂຄງການຈະໄດ້ເອົາເຂົ້າໃນກອບໜ້າວຽກດັ່ງກ່າວນີ້. | ສິ່ງເອກະສານກອບໜ້າວຽກໃຫ້ທະນາຄານໂລກທົບທວນ ແລະ ອະນຸມັດ ກ່ອນທີ່ການຈັດຊື້ຈະເລີ່ມຂຶ້ນ ເພື່ອຮັບປະກັນວ່າມາດຕະການທີ່ກໍານົດໄວ້ໃນກອບສິ່ງແວດລ້ອມ ແລະ ສັງຄົມຈະໄດ້ຮັບການພິຈະລະນາ ແລະ ຈັດຕັ້ງປະຕິບັດຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU |
| **ມສສ 2: ເງື່ອນໄຂດ້ານແຮງງານ ແລະ ການເຮັດວຽກ** | | | |
| 2.1 | ຂັ້ນຕອນການຄຸ້ມຄອງດ້ານແຮງງານ<br><br>ນໍາໃຊ້ ແລະ ຈັດຕັ້ງປະຕິບັດຂັ້ນຕອນການຄຸ້ມຄອງແຮງງານ (LMP) ສໍາລັບໂຄງການ, ລວມທັງ ຂໍ້ກໍານົດກ່ຽວກັບເງື່ອນໄຂການເຮັດວຽກ, ການຄຸ້ມຄອງຄວາມສໍາພັນຂອງພະນັກງານ, ສຸຂະພາບ ແລະ ຄວາມປອດໄພ (ລວມທັງການກຽມຄວາມພ້ອມ ແລະ ຕອບສະໜອງຕໍ່ເຫດການສຸກເສີນ), ກົດລະບຽບການປະພຶດ (ລວມທັງທີ່ກ່ຽວຂ້ອງກັບ SEA ແລະ SH), ການບັງຄັບໃຊ້ແຮງງານ, ແຮງງານເດັກ, ການຄຸ້ມຄອງການແກ້ໄຂຂໍ້ຂ້ອງໃຈ ສໍາລັບພະນັກງານໂຄງການ ແລະ ຜູ້ສະໜອງອຸປະກອນໃຫ້ໂຄງການ. | ນໍາໃຊ້ LMP and SEP ກ່ອນທີ່ທາງທະນາຄານໂລກຈະອະນຸມັດໂຄງການ ແລະ ຈັດຕັ້ງປະຕິບັດຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU |
| 2.2 | ກົນໄກການສະເໜີຂໍ້ຂ້ອງໃຈ ສໍາລັບແຮງງານໃນໂຄງການ | | MPWT/PMU |

| ມາດຕະການ ແລະ ການປະຕິບັດ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ສ້າງຕັ້ງ ແລະ ດໍາເນີນກົນໄກການສະເໜີຂໍ້ຂ້ອງໃຈ ສໍາລັບພະນັກງານໂຄງການ, ດັ່ງທີ່ໄດ້ອະທິບາຍໄວ້ໃນ LMP ແລະ ສອດຄ່ອງກັບ ມສສ 2. MPWT/PMU ຈະຮັບຜິດຊອບວຽກງານການແກ້ໄຂຂໍ້ຂ້ອງໃຈຂອງພະນັກງານໂຄງການ ແລະ ແຕ່ງຕັ້ງພະນັກງານເພື່ອຮັບຜິດຊອບວຽກງານດັ່ງກ່າວ. | ສ້າງຕັ້ງກົນໄກການແກ້ໄຂຂໍ້ຂ້ອງໃຈ ກ່ອນຮັບເອົາພະນັກງານດັ່ງກ່າວເຂົ້າໂຄງການ ແລະ ຮັກສາກົນໄກດັ່ງກ່າວ ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | |
| **ມສສ 3: ປະສິດທິພາບດ້ານຊັບພະຍາກອນ ແລະ ການປ້ອງກັນມົນລະພິດ ແລະ ການຄຸ້ມຄອງ** | | | |
| 3.1 | ປະສິດທິພາບດ້ານຊັບພະຍາກອນ ແລະ ການປ້ອງກັນມົນລະພິດ ແລະ ການຄຸ້ມຄອງ:<br><br>ຄວາມຊ່ວຍເຫຼືອດ້ານວິຊາການຈະຕ້ອງພິຈາລະນາເອົາທາງເລືອກທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ຮັບປະກັນວ່າທາງເລືອກທີ່ດີຈະຖືກສົ່ງເສີມ.<br><br>ຜົນກະທົບໄລຍະຍາວທີ່ອາດຈະເກີດຂຶ້ນແມ່ນຈະໄດ້ເອົາເຂົ້າໃນ ກອບໜ້າວຽກຂອງຊຽວຊານທີ່ຈະເຮັດບົດສຶກສາ ແລະ ວິເຄາະນະໂຍບາຍ<br><br>ສະໜອງງົບປະມານ ແລະ ບຸກຄະລາກອນ ແລະ ເຮັດການຝຶກອົບຮົມເລື່ອງການປ່ອຍທາດອາຍເຮືອນແກ້ວ, ມົນລະພິດທາງອາກາດ, ສຽງ ແລະ ການສັ່ນສະເທືອນ | ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU |
| **ມສສ 4: ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ** *ບໍ່ກ່ຽວຂ້ອງ* | | | |
| **ມສສ 5: ການເວນຄືນທີ່ດິນ, ການຈໍາກັດການນໍາໃຊ້ທີ່ດິນ ແລະ ການຍົກຍ້າຍຈັດສັນໂດຍບໍ່ໄດ້ສະໝັກໃຈ** *ບໍ່ກ່ຽວຂ້ອງ* | | | |
| **ມສສ 6: ການອະນຸລັກຊີວະນາໆພັນ ແລະ ການຄຸFມຄອງຊັບພະຍາກອນທໍາມະຊາດ** *ບໍ່ກ່ຽວຂ້ອງ* | | | |
| **ມສສ 7: ຊົນເຜົ່າພື້ນເມືອງ** *ບໍ່ກ່ຽວຂ້ອງ* | | | |
| **ມສສ 8: ມໍລະດົກທາງວັດທະນະທໍາ** *ບໍ່ກ່ຽວຂ້ອງ* | | | |
| **ມສສ 9: ຕົວກາງທາງການເງິນ** *ບໍ່ກ່ຽວຂ້ອງ* | | | |

| ມາດຕະການ ແລະ ການປະຕິບັດ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| **ມສສ 10: ການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ການເປີດເຜີຍຂໍ້ມູນ** | | | |
| 10.1 | ການກະກຽມແຜນການ ແລະ ການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນ<br><br>ນໍາໃຊ້ ແລະ ປະຕິບັດແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ (SEP) ສໍາລັບໂຄງການ, ສອດຄ່ອງກັບ ມສສ 10, ເຊິ່ງຈະຕ້ອງປະກອບມີມາດຕະການເພື່ອສະໜອງຂໍ້ມູນໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງໄດ້ທັນເວລາ, ມີຄວາມກ່ຽວຂ້ອງ, ເຂົ້າໃຈໄດ້ ແລະ ເຂົ້າເຖິງໄດ້ ແລະ ປຶກສາຫາລືກັບເຂົາເຈົ້າໃນລັກສະນະທີ່ເໝາະສົມທາງດ້ານວັດທະນະທໍາ, ເຊິ່ງປາສະຈາກການໝູນໃຊ້, ການແຊກແຊງ, ການບີບບັງຄັບ, ການຈໍາແນກ ແລະ ການຂົ່ມຂູ່. | SEP ຈະຕ້ອງຖືກສ້າງ ແລະ ເຜີຍແຜ່ ກ່ອນການປະເມີນໂຄງການ ແລະ ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU/PTI |
| 10.2 | ກົນໄກການແກ້ໄຂຂໍ້ຂ້ອງໃຈພາຍໃນໂຄງການ (GRM):<br><br>ສ້າງຕັ້ງ, ໂຄສະນາ, ຮັກສາ, ປະຕິບັດກົນໄກການສະເໜີຂໍ້ຂ້ອງໃຈທີ່ເຂົ້າເຖິງໄດ້, ເພື່ອຮັບແລະ ອໍານວຍຄວາມສະດວກໃນການແກ່ໄຂຂໍ້ກັງວົນ ແລະ ຂໍ້ຂ້ອງໃຈກ່ຽວກັບໂຄງການຢ່າງທັນການ ແລະ ມີປະສິດທິຜົນ, ໂປ່ງໃສ, ເໝາະສົມທາງດ້ານວັດທະນະທໍາ ແລະ ເຂົ້າເຖິງທຸກພາກສ່ວນທີ່ໄດ້ຮັບຜົນກະທົບຈາກໂຄງການ. ໂດຍບໍ່ມີຄ່າໃຊ້ຈ່າຍ ແລະ ບໍ່ມີການລົງໂທດ, ລວມທັງຄວາມກັງວົນ ແລະ ຂໍ້ຂ້ອງໃຈທີ່ຍື່ນໂດຍບໍ່ມີການເປີດເຜີຍຊື່, ໃນລັກສະນະທີ່ສອດຄ່ອງກັບ ມສສ 10.<br><br>ກົນໄກການສະເໜີຂໍ້ຂ້ອງໃຈ ຈະຕ້ອງມີຄວາມພ້ອມໃນການຮັບ, ລົງທະບຽນ ແລະ ອໍານວຍຄວາມສະດວກໃນການແກ່ໄຂຂໍ້ຂ້ອງໃຈທີ່ກ່ຽວຂ້ອງກັບ SEA/SH, ລວມທັງຜ່ານການສົ່ງຜູ້ລອດຊີວິດໄປຫາຜູ້ໃຫ້ບໍລິການ ການຊ່ວຍເຫຼືອດ້ານຄວາມຮຸນແຮງທາງເພດທີ່ກ່ຽວຂ້ອງ, ທັງໝົດນີ້ໃນລັກສະນະທີ່ປອດໄພ, ເປັນຄວາມລັບ ແລະ ເອົາຜູ້ລອດຊີວິດເປັນຈຸດໃຈກາງ. | ກ່ອນເລີ່ມກິດຈະກໍາໂຄງການ ແລະ ຮັກສາໄວ້ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU/PTI |
| **ການສະໜັບສະໜູນດ້ານຄວາມອາດສາມາດ (ການຝຶກອົບຮົມ)** | | | |

| ມາດຕະການ ແລະ ການປະຕິບັດ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| CS1 | ການຝຶກອົບຮົມຫຼັກຈະຖືກຝຶກໃຫ້ພະນັກງານຫ້ອງການຄຸ້ມຄອງໂຄງການ, ຜູ້ມີສ່ວນກ່ຽວຂ້ອງ ແລະ ພະນັກງານໂຄງການ ລວມມີ ແຕ່ບໍ່ຈຳກັດການຝຶກອົບໃນຫົວຂໍ້ດັ່ງຕໍ່ໄປນີ້:<br>• ການຝຶກອົບຮົມຄວາມຮູ້ທົ່ວໄປກ່ຽວກັບມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ຂອງກອບສິ່ງແວດລ້ອມ ແລະ ສັງຄົມ ລວມທັງ LMP, SEP ແລະ GRM.<br>• ລວມທັງການກຽມຄວາມພ້ອມ ແລະ ຕອບສະໜອງຕໍ່ເຫດການສຸກເສີນ | 2 ເດືອນຫຼັງຈາກໂຄງການໄດ້ຮັບການຮັບຮອງ ແລະ ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດໂຄງການ | MPWT/PMU/PTI |